# ແຈ້ງການ: ອັດຕາດອກເບ້ຍເງິນຝາກ

### ມີຜົນສັກສິດນັບແຕ່ວັນທີ 30 ມີນາ 2023

## ອັດຕາດອກເບ້ຍເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ

% ຕໍ່ປີ

| ປະເພດເງິນຝາກ | ກີບ | ໂດລາ | ບາດ |
|---|---|---|---|
| ບັນຊີກະແສລາຍວັນ | 0.00% | 0.00% | 0.00% |
| ບັນຊີຝາກປະຢັດ | 1.00% | 0.65% | 0.25% |

## ອັດຕາດອກເບ້ຍເງິນຝາກປະຈຳ

% ຕໍ່ປີ

| ໄລຍະເວລາຝາກປະຈຳ | ກີບ | ໂດລາ | ບາດ |
|---|---|---|---|
| 3 ເດືອນ | 3.00% | 2.50% | 1.10% |
| 6 ເດືອນ | 4.00% | 2.70% | 1.85% |
| 12 ເດືອນ | 6.00% | 2.90% | 2.50% |
| 18 ເດືອນ | 6.15% | 3.10% | 3.35% |
| 24 ເດືອນ | 6.40% | 3.30% | 3.50% |
| 36 ເດືອນ | 6.60% | 3.50% | 4.00% |
| 48 ເດືອນ | 6.65% | - | - |
| 60 ເດືອນ | 6.75% | - | - |

## ອັດຕາດອກເບ້ຍອ້າງອີງສຳຫຼັບເງິນກູ້

% ຕໍ່ປີ

| ໄລຍະເວລາເງິນກູ້ | ກີບ | ໂດລາ | ບາດ |
|---|---|---|---|
| 12 ເດືອນ | 11.50% | 8.00% | 8.00% |
| 24 ເດືອນ | 12.50% | 9.75% | 10.00% |
| 36 ເດືອນ | 12.50% | 9.75% | 10.00% |

ໝາຍເຫດ:

- ອັດຕາດອກເບ້ຍຂ້າງເຖິງ ອາດມີການປ່ຽນແປງໂດຍບໍ່ຕ້ອງແຈ້ງລ່ວງໜ້າ
- ການແຈ້ງການສະບັບນີ້ແມ່ນຖືກນຳໃຊ້ແທນ ການແຈ້ງການ ຄັ້ງວັນທີ 21 ເມສາ 2022

# ເງື່ອນໄຂການຝາກເງິນ

1. ເງິນຝາກເບື້ອງຕົ້ນ (ນຳໃຊ້ກັບທຸກປະເພດບັນຊີ)

| ປະເພດບັນຊີ | ເງິນຝາກເບື້ອງຕົ້ນ | | |
|---|---|---|---|
| | ກີບ | ໂດລາ | ບາດ |
| **ເງິນຝາກກະແສລາຍວັນ** | 1,250,000.00 | 200.00 | 5,000.00 |
| **ເງິນຝາກປະຢັດ** | 250,000.00 | 40.00 | 1,000.00 |
| **ເງິນຝາກປະຈຳ** | 2,500,000.00 | 400.00 | 10,000.00 |

2. ດອກເບ້ຍຂ້າງເທິງຈະຖືກນຳໃຊ້ກັບລູກຄ້າທຸກປະເພດ.

*ບັນຊີເງິນຝາກປະຢັດ:*

3. ຈ່າຍດອກເບ້ຍ ປີລະ 2 ຄັ້ງ (ໃນວັນທີ 25 ມິຖຸນາ ແລະ 25 ທັນວາ).
4. ກໍລະນີປິດບັນຊີເງິນຝາກກ່ອນ 3 ເດືອນຈາກວັນເປີດບັນຊີ ຈະມີການຄິດໄລ່ຄ່າບໍລິການ.
5. ກໍລະນີບໍ່ມີການເຄື່ອນໄຫວໃນບັນຊີຮອດ 12 ເດືອນ ນັບແຕ່ມື້ເຮັດທຸລະກຳຄັ້ງສຸດທ້າຍ, ຈະມີຄ່າທຳນຽມບຳລຸງຮັກສາບັນຊີ ແລະ ຄ່າທຳນຽມດັ່ງກ່າວຈະຖືກເກັບໃນມື້ທ້າຍເດືອນຂອງທຸກໆເດືອນຈົນກວ່າບັນຊີຈະຖືກປິດ ຫຼື ລູກຄ້າໄດ້ມາເຄື່ອນໄຫວບັນຊີ.

*ບັນຊີເງິນຝາກກະແສລາຍວັນ:*

6. ກໍລະນີປິດບັນຊີເງິນຝາກກ່ອນ 3 ເດືອນ ຈາກວັນເປີດບັນຊີ ຈະມີການຄິດໄລ່ຄ່າບໍລິການ.
7. ຈະມີການຄິດໄລ່ຄ່າບຳລຸງຮັກສາທຸກໆ ປີ.
8. ກໍລະນີບໍ່ມີການເຄື່ອນໄຫວໃນບັນຊີຮອດ 12 ເດືອນ ນັບແຕ່ມື້ເຮັດທຸລະກຳຄັ້ງສຸດທ້າຍ, ຈະມີຄ່າທຳນຽມບຳລຸງຮັກສາບັນຊີ ແລະ ຄ່າທຳນຽມດັ່ງກ່າວຈະຖືກເກັບໃນມື້ທ້າຍເດືອນຂອງທຸກໆເດືອນຈົນກວ່າບັນຊີຈະຖືກປິດ ຫຼື ລູກຄ້າໄດ້ມາເຄື່ອນໄຫວບັນຊີ.

*ບັນຊີເງິນຝາກປະຈຳ:*

9. ຈ່າຍດອກເບ້ຍເມື່ອຄົບກຳນົດ.
10. ຖອນເງິນບໍ່ສາມາດຖອນເປັນບາງສ່ວນໄດ້.
11. ເງິນຝາກສາມາດຖອນໄດ້ຢ່າງເຕັມຈຳນວນກ່ອນຄົບກຳນົດ ໂດຍລູກຄ້າຕ້ອງແຈ້ງທະນາຄານລ່ວງໜ້າ 1 ວັນ ແລະທະນາຄານຈະນຳໃຊ້ອັດຕາດອກເບ້ຍ ຂອງເງິນຝາກປະຈຳໄລຍະກ່ອນໜ້າ ທີ່ໃກ້ທີ່ສຸດເພື່ອມາຄິດໄລ່ໃຫ້ລູກຄ້າ ແລະ ຈະມີການຄິດໄລ່ຄ່າບໍລິການປິດບັນຊີກ່ອນເຖິງກຳນົດ.
12. ຖ້າຫາກວ່າການໄຖ່ຖອນຄືນກ່ອນກຳນົດໜ້ອຍກວ່າ 3 ເດືອນ, ທະນາຄານຈະນຳໃຊ້ອັດຕາດອກເບ້ຍຂອງບັນຊີເງິນຝາກປະຢັດເພື່ອມາຄິດໄລ່ໃຫ້ລູກຄ້າ.
13. ການຝາກເງິນລະຫວ່າງກາງບໍ່ສາມາດເຮັດໄດ້ ລູກຄ້າຈະຕ້ອງເປີດບັນຊີໃໝ່ ແລະ ລົງທຶນໃນໄລຍະເວລາໃໝ່.
14. ກໍລະນີມີການປະກາດດອກເບ້ຍເງິນຝາກໃໝ່:

    14.1 ບັນຊີເງິນຝາກປະຢັດ ແລະ ບັນຊີເງິນຝາກກະແສລາຍວັນ: ທະນາຄານຈະປ່ຽນໃຫ້ທັນທີໃນວັນທີ່ດອກເບ້ຍມີຜົນສັກສິດ.

    14.2 ບັນຊີເງິນຝາກປະຈຳ: ດອກເບ້ຍທີ່ປະກາດໃໝ່ຈະນຳໃຊ້ກັບບັນຊີໃໝ່ ຫຼື ບັນຊີທີ່ຕໍ່ອາຍຸໃນວັນທີ່ດອກເບ້ຍໃໝ່ມີຜົນສັກສິດເທົ່ານັ້ນ ແລະ ບັນຊີທີ່ຍັງບໍ່ເຖິງກຳນົດໃຫ້ນຳໃຊ້ດອກເບ້ຍເດີມຈົນກ່ວາຈະຄົບກຳນົດ.
15. ກໍລະນີບໍ່ມີການເຄື່ອນໄຫວໃນບັນຊີຮອດ 12 ເດືອນ ນັບຈາກວັນຄົບກຳນົດ, ຈະມີຄ່າທຳນຽມບຳລຸງຮັກສາບັນຊີ ແລະ ຄ່າທຳນຽມດັ່ງກ່າວຈະຖືກເກັບໃນມື້ທ້າຍເດືອນຂອງທຸກໆເດືອນຈົນກວ່າບັນຊີຈະຖືກປິດ ຫຼື ລູກຄ້າໄດ້ມາເຄື່ອນໄຫວບັນຊີ.